**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເລກທີ 645/ຖວ

ນະຄອນຫຼວງວຽງຈັນ, ວັນທີ 16 / 09 / 2003

# ຂໍ້ກຳນົດ

## ຂອງລັດຖະມົນຕີວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ວ່າດ້ວຍການ ຄຸ້ມຄອງ ແລະ ກວດກາ ສະຖານທີ່ບັນເທີງ ແລະ ຫ້ອງຄາລາໂອເກະ ຢູ່ ສປປ ລາວ

- *ອີງໃສ່ ລັດຖະທຳມະນູນ ແລະ ກົດໝາຍ ແຫ່ງ ສປປ ລາວ*
- *ອີງໃສ່ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 25/ນຍ,ລົງວັນທີ 24 / 03 / 1999 ວ່າດ້ວຍທີ່ຕັ້ງ, ພາລະບົດບາດ ແລະການເຄື່ອນໄຫວວຽກງານ ຂອງ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ,*

## ລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຕົກລົງອອກຂໍ້ກຳນົດ

### ໝວດທີ I

### ຫລັກການລວມ

**ມາດຕາ 1. ຈຸດປະສົງ**

1.1 ເພື່ແນ່ໃສ່ຜັນຂະຫຍາຍມະຕິ ຂອງຄະນະບໍລິຫານງານສູນກາງພັກ ກ່ຽວກັບວຽກງານແນວຄິດວັດທະນະທຳໃນໄລຍະໃໝ່, ແນ່ໃສ່ອະນຸລັກປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອ ສິລະປະວັດທະນະທຳອັນດີງາມຂອງຊາດ, ຫັນເອົາວຽກງານຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ໃຫ້ເຂົ້າສູ່ລະບຽບກົດໝາຍເທື່ອລະກ້າວ;

1.2 ເພື່ອເປັນບ່ອນອີງໃຫ້ແກ່ບັນດາ ພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ ໃນທົ່ວປະເທດ ກຳນົດລະບຽບການລະອຽດ ເພື່ອຄຸ້ມຄອງ, ກວດກາ, ອະນຸຍາດ ສະຖານທີ່ບັນເທີງ ແລະ ຄາລາໂອເກະ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

1.3 ເພື່ອສົ່ງເສີມແບບແຜນດຳລົງຊີວິດວັດທະນະທຳໃຫມ່ ທີ່ຈົບງາມ ໃຫ້ມີລັກສະນະກ້າວໜ້າ ແລະ ມະຫາຊົນ ເພື່ອຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ.

**ມາດຕາ 2. ນິຍາມ**

1.1 ຫ້ອງບັນເທີງ: ແມ່ນສະຖານທີ່ໃຫ້ການບັນເທີງ ດ້ວຍການເສບດົນຕີ, ຮ້ອງເພງ, ຂັບລຳ ແລະ ລະຄອນເວທີ ຫລື ດ້ວຍວິທີການອື່ນໆ ທີ່ເປັນການສະແດງສິລະປະດົນຕີ ເພື່ອຄວາມ ເບີກບານມ່ວນຊື່ນ ແລະ ພັກຜ່ອນຢ່ອນອາລົມຂອງມວນຊົນ;

1.2 ຫ້ອງບັນເທີງ ຕ້ອງຢູ່ຫ່າງໄກຈາກບັນດາສຳນັກງານອົງການ ຂອງ ພັກ-ລັດ, ວັດວາອາຮາມ, ໂຮງຫມໍ, ໂຮງຮຽນ ແລະ ເຂດບ່ອນຊຸມຊົນຫນາແຫນ້ນ, ສະຖານທີ່ຕ້ອງກວ້າງຂວາງ, ອາກາດປອດໂປ່ງ, ໄຟແສງສີຕ້ອງພໍດີພໍງາມ ບໍ່ວິນວຽນລາຍຕາ ແລະ ບໍ່ມືດໂພດ, ເກັບສຽງ ທີ່ໄດ້ມາດຖານ, ການປະດັບປະດາຕົກແຕ່ງ ຖືກຕ້ອງຕາມວັດທະນະທຳລາວ, ສະຖານທີ່ ຈອດລົດກວ້າງຂວາງ;

1.3 ສະຖານທີ່ສາທາລະນະ: ແມ່ນສະຖານທີ່ຊຸມຊົນ ເຊັ່ນ: ສວນສາທາລະນະ, ສວນວັດທຳ, ສວນກິລາ, ເດີ່ນກິລາ, ຕະຫລາດ, ສະຖານນີຈອດລົດ, ທ່າເຮືອ, ອາຄານຕ້ອນຮັບຂອງເດີນບິນ, ສວນອາຫານ ແລະ ສະຖານທີ່ທຳພິທີກຳຕ່າງໆ;

1.4 ສະຖານທີ່ບໍລິການ: ແມ່ນບ່ອນບໍລິການມວນຊົນ ເພື່ອການພົວພັນແລກປ່ຽນ, ຊື້-ຂາຍ ຖືກຕ້ອງຕາມລະບຽບກົດໝາຍ ຫລື ໃຫ້ການຊ່ວຍເຫລືອລ້າ. ການບໍລິໂພກ ແລະ ອຸປະກອນທຸກປະເພດ ເຊັ່ນ: ຮ້ານອາຫານ ແລະ ກິນດື່ມ, ສູນການຄ້າ, ດ່ານຊາຍແດນ, ຮ້ານຂາຍເຄື່ອງຜະລິດຕະພັນວັດຖຸວັດທະນະທຳທຸກປະເພດ, ການສ້ອມແປງ, ຮ້ານຕັດຜົມ, ເສີມສວຍ, ຫລິ້ນເກມ, ກາຊີໂນ, ຮູບເງົາ, ຄາລາໂອເກະ ແລະ ພາຫະນະຮັບໃຊ້ໂດຍສານທາງບົກ, ທາງນ້ຳ ແລະ ທາງອາກາດ;

1.5 ພະນັກງານບໍລິຫານ: ແມ່ນຜູ້ເຮັດວຽກປະຈຳ ຫລື ສັນຍາຈ້າງຊົ່ວຄາວ ຢູ່ຕາມໂຮງແຮມ, ເຮືອນພັກ, ຫໍຮັບແຂກ, ຫ້ອງບັນເທີງ-ຄາລາໂອເກະ, ຮ້ານອາຫານກິນດື່ມ, ກາຊີໂນ, ລີສອດ, ຫ້າງຮ້ານຜະລິດຕະພັນວັດຖຸວັດທະນະທຳ, ຮ້ານສັບພະສິນຄ້າ ແລະ ສະຖານທີ່ສາທາລະນະປະໂຫຍດອື່ນໆ;

1.6 ສິລະປິນ: ແມ່ນນັກສະແດງ, ນັກປະດິດຄິດແຕ່ງບົດປະພັນ, ນັກເສບດົນຕີ, ນັກຮ້ອງ, ນັກຟ້ອນ, ຫມໍຂັບ, ຫມໍລຳ, ນັກຕະຫລົກຊວນຫົວ, ມານຍາກົນ, ນັກອອກແບບ, ລະຄອນເວທີ, ນັກປັ້ນຫລໍ່, ແກະສະຫລັກ, ຮູບພາບ, ແຕ້ມຮູບອາຊີບ ແລະ ສະຫນັກຫລິ້ນ;

1.7 ການບໍລິການບັນເທີງກາງແຈ້ງ: ແມ່ນການເສບດົນຕີ, ຂັບ-ລຳ, ຮ້ອງ, ຟ້ອນ ແລະ ການສະແດງອື່ນໆ ຕາມສະຖານທີ່ສາທາລະນະ ແລະ ສະຖານທີ່ບໍລິການ;

1.8 ສວນສາທາລະນະ: ແມ່ນສະຖານທີ່ພັກຜ່ອນ ຢ່ອນອາລົມ ຂອງ ມວນຊົນ ຂອງຄົນພາຍໃນ ແລະ ແຂກຕ່າງປະເທດ ເຊັ່ນ: ສະຖານທີ່ທ່ອງທ່ຽວວັດທະນະທຳ, ປະຫວັດສາດ ຂອງຊາດ ຂອງການປະຕິວັດ ແລະ ແຫຼ່ງທ່ອງທ່ຽວທຳມະຊາດເປັນຕົ້ນ.

# ໝວດທີ II
## ວ່າດ້ວຍການອະນຸລັກ, ແລະ ສົ່ງເສີມ
## ການເຄື່ອນໄຫວຊີວິດວັດທະນະທຳ ຢູ່ຕາມສະຖານທີ່ຕ່າງໆ

**ມາດຕາ 3. ການສົ່ງເສີມ**

- ລັດສົ່ງເສີມໃຫ້ບັນດາອົງການຈັດຕັ້ງຕ່າງໆ, ລັດວິສາຫະກິດ, ນິຕິບຸກຄົນ, ລວມໝູ່ ແລະ ເອກະຊົນ ເຄື່ອນໄຫວກິດຈະການ ທາງ ດ້ານວັດທະນະທຳອັນດີງາມຂອງຊາດ, ຂອງຊົນເຜົ່າ ແລະ ຂອງທ້ອງຖິ່ນ ທີ່ບໍ່ຂັດກັບລະບຽບກົດໝາຍ.

**ມາດຕາ 4. ການປະດັບປະດາ**

- ລັດສົ່ງເສີມໃຫ້ມີການປະດັບ ປະດາຕົກແຕ່ງ, ເອ້ຢ້ອງ ທັງພາຍໃນ ແລະ ພາຍນອກອາຄານ ສະຖານທີ່ຢູ່ອາໃສ, ສວນສາທາລະນະ, ເຂດຊຸມຊົນ ແລະ ສຳນັກງານອົງການຕ່າງໆ ໃຫ້ຈົບງາມ, ທີ່ເປັນເອກະລັກສິລະປະວັດທະນະທຳລາວ.

**ມາດຕາ 5: ການມ່ວນຊື່ນ**

- ລັດສົ່ງເສີມໃຫ້ບັນດາສະຖານທີ່ບັນເທີງໃນຮົ່ມ ມີຫ້ອງເກັບສຽງ ບໍລິການເສບດົນຕີພື້ນເມືອງ ລາວ ແລະ ສາກົນ, ຂັບ, ລຳ, ຮ້ອງ, ຟ້ອນລຳວົງລາວ, ຕະຫລົກຊວນຫົວມີເນື້ອຫາສາລະ ແລະ ບໍ່ສຽດສີຜູ້ອື່ນ ເພື່ອສ້າງບັນຍາກາດ ເບີກບານມ່ວນຊື່ນ ໃຫ້ແກ່ຜູ້ມາຊົມໃຊ້.

**ມາດຕາ 6. ການແຕ່ງກາຍ**

- ພະນັກງານປະຈຳ, ພະນັກງານຕາມສັນຍາ ແລະ ບໍລິການເສີບອາຫານ ຢູ່ຕາມໂຮງແຮມ, ເຮືອນພັກ, ເຮືອນຮັບແຂກ, ຫໍພັກ, ຮ້ານອາຫານ, ຮ້ານກິນດື່ມ, ຮ້ານບັນເທີງທຸກປະເພດ, ຮ້ານຄ້າຂອງລັດ, ຂອງລວມໝູ່, ລັດສົ່ງເສີມໃຫ້ມີການແຕ່ງກາຍດ້ວຍເສື້ອຜ້າອາພອນ ຕາມປະເພນີແບບຊົນເຜົ່າໃດໜຶ່ງ ຫລື ແບບທົ່ວໆ ໄປກໍໄດ້, ແຕ່ຕ້ອງໃຫ້ສຸພາບຈົບງາມ, ສ່ວນເຄື່ອງແບບສະເພາະຂອງບໍລິສັດຫ້າງຮ້ານ ຕ້ອງໄດ້ຮັບອະນຸມັດ ຈາກເຈົ້າໜ້າທີ່ວັດທະນະທຳເສັຍກ່ອນຈິ່ງສາມາດນຳໃຊ້ໄດ້.

6.1 ພະນັກງານບໍລິການທັງຍິງ-ຊາຍ ຕ້ອງມີບັດປະຈຳຕົວ, ມີປ້າຍຊື່, ຊື່ຮ້ານທີ່ປະຈຳຢູ່ ແລະ ມີໃບກວດກາສຸຂະພາບ ຢ່າງຖືກຕ້ອງ.

## ໝວດທີ III

## ສິດຄຸ້ມຄອງ, ອະນຸຍາດ ແລະ ກວດກາ

**ມາດຕາ 7. ການແບ່ງຂັ້ນຄຸ້ມຄອງ ແລະ ອະນຸຍາດ:**

7.1 ຂັ້ນສູນກາງ ( ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ) ມີ ສິດອອກຂໍ້ຕົກລົງ, ແຈ້ງການ, ກຳນົດ ໃນການຄຸ້ມຄອງມະຫາພາກ ຕໍ່ການເຄື່ອນໄຫວກິດຈະການບັນເທີງ ແລະ ຄາລາໂອເກະ ໃນທົ່ງປະເທດ;

7.2 ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ມີສິດລົງໄປກວດກາການວາງລະບຽບ ແລະ ການຈັດຕັ້ງປະຕິບັດ ການຕຄຸ້ມຄອງກວດກາ ກິດຈະການບັນເທີງ, ຄາລາໂອເກະ ຂັ້ນລຸ້ມຂອງຕົນ ແລະ ມີສິດອອກອານຸມັດກິດຈະການ ທີ່ກ່ຽວກັບສິລະປະວັດທະນະທຳ ໃຫ້ແກ່ໂຄງ ການໃຫຍ່ໆ ຂອງຕ່າງປະເທດ ທີ່ລັດຖະບານອະນຸມັດ;

7.3 ແຂວງ, ນະຄອນຫລວງວຽງຈັນ ຫຼື ເຂດພິເສດ ມີສິດຫນ້າທີ່ນຳເອົາຂໍ້ກຳນົດສະບັບນີ້ ເປັນບ່ອນອີງ ເພື່ອວາງລະບຽບການຈັດຕັ້ງຄຸ້ມຄອງ, ກວດກາ ແລະ ເຄື່ອນໄຫວ ອັນລະອຽດ ໃຫ້ສອດຄ່ອງກັບສະພາບຈຸດພິເສດ ໃນທ້ອງຖິ່ນຂອງຕົນ, ມີສິດອອກ ໃບອະນຸຍາດດຳເນີນທຸລະກິດບັນເທີງ ແລະ ຄາລາໂອເກະ ໃຫ້ຄົນລາວ ແລະ ຊາວຕ່າງ ປະດ້າວ ທີ່ຢູ່ໃນຂອບເຂດທ້ອງຖິ່ນຂອງຕົນ;

7.4 ຂັ້ນເມືອງ ມີສິດ ແລະຫນ້າທີ່ ໃນການປະກອບຄຳຄິດຄຳເຫັນໃສ່ໃບສະເຫນີ, ໃບຄຳຮ້ອງ ຂໍອະນຸຍາດລົງທຶນ ເພື່ອຢັ້ງຢືນໃຫ້ແກ່ຂັ້ນເທິງຂອງຕົນ ແລະ ມີຫນ້າທີ່ອະນຸຍາດ, ກວດກາ, ຄຸ້ມຄອງການລົງທຶນຂະຫນາດນ້ອຍ ໃນຂອບເຂດເມືອງຂອງຕົນ ຕາມການ ເຫັນດີ ຂອງຂັ້ນເທິງ.

**ມາດຕາ 8. ການກວດກາ ແລະ ການຈັດຕັ້ງປະຕິບັດ**

8.1 ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ມີສິດກວດກາ ການປະຕິບັດຂໍ້ກຳນົດ ກົດລະບຽບທີ່ ກະຊວງ ແລະ ທ້ອງຖິ່ນວາງອອກ, ກວດກາຂະແຫນງຖະແຫລງຂ່າວ ແລະ ວັດທະນະທຳ, ທີ່ກ່ຽວຂ້ອງ ມີສິດສະເຫນີກະຊວງ, ລັດຖະບານ ເພື່ອລົບລ້າງຂໍ້ກຳນົດ, ກົດລະບຽບ ຂອງທ້ອງຖິ່ນ ທີ່ເຫັນວ່າບໍ່ຖືກຕ້ອງ, ໃນກໍລະນີທ້ອງຖິ່ນບໍ່ປະຕິບັດ ຕາມສິດ ຫນ້າທີ່ຂອງຕົນ, ກະຊວງມີສິດແຕ່ງຕັ້ງຄະນະສະເພາະກິດ ລົງໄປແກ້ໄຂບັນຫາດັ່ງກ່າວ ໂດຍທັນທີ;

8.2 ພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ ມີສິດກວດກາບັນດາຮ້ານບັນເທີງ ແລະ ກິດຈະການຕ່າງໆ ທີ່ຕົນອະນຸມັດ. ກວດກາການປະຕິບັດງານຂັ້ນລຸ່ມຂອງຕົນ ແລະ ມີສິດສະເຫນີການຍ້ອງຍໍຊົມເຊີຍ ຜູ້ດີເດັ່ນ, ປັບໃຫມ ຕາມລະບຽບຕໍ່ຜູ້ທີ່ລ່ວງລະເມີດ ຢູ່ພາຍໃນທ້ອງຖິ່ນຂອງຕົນ, ແຕ່ຕ້ອງ ລາຍງານຢ່າງເປັນທາງການໃຫ້ກະຊວງ (ກົມວັດທະນະທຳມະຫາຊົນ) ຮັບຊາບນຳ.

## ໝວດທີ IV
## ວ່າດ້ວຍຂໍ້ຫ້າມ

**ມາດຕາ 9. ຂໍ້ຫ້າມ**

9.1 ເຈົ້າຂອງໂຮງແຮມ, ເຮືອນພັກ, ເຮືອນຮັບແຂກ, ລີສອດ, ກາຊີໂນ, ຮ້ານອາຫານ, ຫ້ອງບັນເທີງ ແລະ ແຂກຜູ້ເຂົ້າໄປໃຊ້ບໍລິການ ຕ້ອງປະຕິບັດຂໍ້ກຳນົດກົດໝາຍ ແຫ່ງ ສປປ ລາວ ຢ່າງເຂັ້ມງວດ ຖ້າມີການກະທຳຜິດ ເຈົ້າຂອງກິດຈະການ ນັ້ນຕ້ອງຮັບຜິດຊອບ ທັງໝົດ;

9.2 ຫ້າມສິລະປິນເຄື່ອນໄຫວຢູ່ຫ້ອງບັນເທີງ, ການບັນເທີງກາງແຈ້ງ ຮ້ອງເພງ ແລະ ຟ້ອນຈັງຫວະຂອງຕ່າງປະເທດ, ຍົກເວັ້ນ ເພງ ແລະ ຈັງຫວະຟ້ອນ ທີ່ໄດ້ຮັບອະນຸຍາດ ແລ້ວ;

9.3 ຫ້າມນັກສິລະປິນຍິງ, ພະນັກງານບໍລິການຍິງ ແລະ ຜູ້ເຂົ້າໄປຊົມໃຊ້ນຸ່ງໂສ້ງຂາສັ້ນ, ນຸ່ງກະໂປ່ງເຂີນ, ບາງ, ນຸ່ງແຕ່ເສື້ອຊ້ອນ, ເສື້ອກະແລ່ງ ( ສາຍດຽວ ) ແລະ ຊຸດບໍ່ສຸພາບ. ຫ້າມຍ້ອມຜົມເປັນສີຕ່າງໆ ທີ່ບໍ່ແມ່ນສີທຳມະຊາດຂອງຜົມ. ຫ້າມສິລະປິນຊາຍ ແລະ ພະນັກງານບໍລິການຊາຍນຸ່ງເຄື່ອງເພດຍິງ, ນຸ່ງແຕ່ເສື້ອຊ້ອນ, ເສື້ອກ້າມ ແລະ ນຸ່ງເຄື່ອງທີ່ມີຮູບພາບໂຄສະນາບໍ່ສຸພາບ, ຫ້າມໃສ່ຕູ້ມຫູ, ບ່ອງຫູ, ບ່ອງດັງ, ຈິ່ງຜົມຍາວ ແລະ ຍ້ອມຜົມເປັນ ສີຕ່າງໆ ທີ່ບໍ່ແມ່ນມີທຳມະຊາດຂອງຜົມ;

9.4 ຫ້າມເປີດບໍລິການບັນເທີງກາງແຈ້ງ ຢູ່ເຂດຊຸມຊົນໜາແໜ້ນ, ບໍລິເວນໃກ້ກັບສຳນັກງານອົງການຂອງພັກ-ລັດ, ບໍລິເວນໃກ້ກັບໂຮງຮຽນ, ໂຮງໝໍ ແລະ ວັດ. ຍົກເວັ້ນໃນວັນສຳຄັນ ຂອງຊາດ, ຂອງສາກົນ, ຂອງພາກສ່ວນກ່ຽວຂ້ອງ ໃດໜຶ່ງໃນວັນສຳຄັນບາງຄັ້ງຄາວ ແລະ ງານສຳຄັນອື່ນໆ ໂດຍແມ່ນອົງການຈັດຕັ້ງລັດເປັນຜູ້ຈັດຕັ້ງຂື້ນ, ແຕ່ຕ້ອງໄດ້ອະນຸຍາດ ຈາກ ພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດເສັຍກ່ອນ;

9.5 ຫ້າມເຈົ້າຂອງຮ້ານ ຫລື ຫ້ອງບັນເທີງ, ຄາລາໂອເກະ ອະນຸຍາດໃຫ້ໄວໜຸ່ມຍິງ-ຊາຍ ແລະ ນັກຮຽນ ທີ່ມີອາຍຸຕ່ຳກວ່າ 18 ປີ ເຂົ້າຊົມໃຊ້ຫ້ອງບັນເທີງ, ຄາລາໂອເກະ. ຫ້າມບໍ່ໃຫ້ມີການ ມົ້ວສຸມໂສເພນີ ແລະ ສິ່ງເສບຕິດ;

9.6 ສະຖານທີ່ສາທາລະນະ, ສະຖານທີ່ບໍລິການ ແລະ ສະໂມສອນຕ່າງໆ ຫ້າມເປີດເພງ, ເປີດລາຍການວິທະຍຸ-ໂທລະພາບ ແລະ ຄາລາໂອເກະເພງຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ຫ້າມບໍ່ໃຫ້ເປີດສຽງດັງແຮງ ເກີນຂອບເຂດທີ່ຈະເປັນ ການລົບກວນຄວາມສະຫງົບຂອງສັງຄົມ ແລະ ຜູ້ຄົນ ຢູ່ຂ້າງຄຽງ;

9.7 ຫ້າມບໍ່ໃຫ້ຕິດຮູບພາບໂປ້ເປືອຍ ແລະ ຮູບອື່ນໆ ທີ່ບໍ່ສອດຄ່ອງກັບຮີດຄອງປະເພນີຂອງລາວ, ຫ້າມຕິດຮູບຜູ້ນຳຕ່າງປະເທດ ຢູ່ຕາມສະຖານທີ່ສາທາລະນະ ແລະ ສະຖານທີ່ບໍລິການຊຸມຊົນຕ່າງໆ ກ່ອນໄດ້ຮັບອະນຸຍາດໂດຍເດັດຂາດ.

## ໝວດທີ V
## ວ່າດ້ວຍ ການຍ້ອງຍໍ ແລະ ມາດຕາການຕໍ່ຜູ້ລະເມີດ

**ມາດຕາ 10: ການຍ້ອງຍໍ**

- ການຈັດຕັ້ງລວມໝູ່, ບໍລິສັດພາກລັດ ແລະ ເອກະຊົນ ທີ່ເຄື່ອນໄຫວບໍລິການ ກິດຈະການບັນເທີງ ແລະ ຄາລາໂອເກະຖືກຕ້ອງຕາມ ຂໍ້ກຳນົດ ກົດລະບຽບ ກົດໝາຍ ຈະໄດ້ຮັບການປົກປ້ອງ, ສົ່ງເສີມ, ຊຸກຍູ້ ແລະ ຍ້ອງຍໍສັນລະເສີນຕາມ ຄວາມເຫມາະສົມ.

**ມາດຕາ 11: ມາດຕະການຕໍ່ຜູ້ລະເມີດ**

**ຖ້າຜູ້ໃດລະເມີດຂໍ້ກຳນົດສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃຫມ, ຖອນໃບອະນຸຍາດ, ຢຶດອຸປະກອນ ແລະ ສັ່ງປິດກິດຈະການ ຕາມລຳດັບ ດັ່ງນີ້:**

- **ກະທຳຜິດຄັ້ງທີ ໜຶ່ງ:** ສຶກສາອົບຮົມ, ຕັກເຕືອນ ແລະ ເຮັດບົດບັນທຶກ ການກະທຳຜິດ;
- **ກະທຳຜິດຄັ້ງທີ ສອງ:** ເຮັດບົດບັນທຶກການກະທຳຜິດ ແລະ ປັບໃຫມ 5.000.000 ( ຫ້າລ້ານກີບ );
- **ກະທຳຜິດຄັ້ງທີ ສາມ:** ເຮັດບົດບັນທຶກການກະທຳຜິດ ແລະ ປັບໃຫມ 10.000.000 ( ສິບລ້ານກີບ );
- **ກະທຳຜິດຄັ້ງທີ ສີ່:** ຖອນໃບອະນຸຍາດ, ຢຶດອຸປະກອນບັນເທີງ, ສັ່ງປິດກິດຈະການ ແລະ ປະ ກອບສຳນວນຄະດີສົ່ງຟ້ອງສານຕັດສິນຕາມລະບຽບກົດຫມາຍ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 12: ການມອບສິດຫນ້າທີ່**

- ມອບໃຫ້ກົມວັດທະນະທຳມະຫາຊົນ, ພະແນກຖະແຫລງຂ່າວ-ວັດທະນະທຳ ປະຈຳແຂວງ, ນະຄອນຫລວງວຽງຈັນ, ເຂດພິເສດ ແລະ ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳ ປະຈຳເມືອງ ໃນທົ່ວປະເທດ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ກຳນົດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 13: ຜົນສັກສິດ**

- ຂໍ້ກຳນົດສະບັບນີ້ ມີຜົນສັກສິດປະກາດໃຊ້ເປັນທາງການ ນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ, ທຸກຂໍ້ກຳນົດ ກົດລະບຽບ ທີ່ຂັດກັບຂໍ້ກຳນົດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການ

ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ

**ພັນດວງຈິດ ວົງສາ**

( ເຊັນ ແລະ ຈ້ຳກາແລ້ວ )